ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 68 /ນຍ

ນາຍົກລັດຖະມົນຕີ

# ດຳລັດ

## ວ່າດ້ວຍ ການສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປລາວ ເລກທີ 01/95, ລົງວັນທີ 8 ມີນາ 1995;
- ອີງຕາມກົດໝາຍແຮງງານ ເລກທີ 002/ສພຊ, ລົງວັນທີ 14 ທັນວາ 1994;
- ອີງຕາມການສະເໜີ ຂອງລັດຖະມົນຕີວ່າການກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ດຳລັດສະບັບນີ້ ກຳນົດລະບຽບການຄຸ້ມຄອງ ແລະອຳນວຍຄວາມສະດວກ ໃຫ້ແກ່ການບໍລິການ ສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ, ແນໃສ່ສົ່ງເສີມການມີວຽກເຮັດງານທຳ ແລະ ຍົກລະດັບສີມືແຮງງານ ຂອງພົນລະເມືອງລາວ, ຍາດແຍ່ງເອົາຄວາມຮູ້-ຄວາມສາມາດ ດ້ານວິຊາການ-ເຕັກນິກ, ສ້າງເງື່ອນໄຂການຮ່ວມມືສາກົນ ເພື່ອພັດທະນາສີມືແຮງງານລາວ.

ມາດຕາ 2. ລັດປົກປ້ອງຜົນປະໂຫຍດອັນຊອບທຳ ໃຫ້ແກ່ບຸກຄົນ ແລະ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດ ສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ ແລະ ບັນດາຜູ້ອອກແຮງງານລາວ ທີ່ຖືກສົ່ງໄປອອກແຮງງານ ຢູ່ຕ່າງປະເທດ ຢ່າງຖືກຕ້ອງ ຕາມດຳລັດສະບັບນີ້.

## ໝວດທີ II
## ເງື່ອນໄຂ, ສິດ ແລະ ໜ້າທີ່
## ຂອງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ

<u>ມາດຕາ 3.</u> ຜູ້ອອກແຮງງານລາວ ທີ່ຈະໄປເຮັດວຽກ ຢູ່ຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

- ເປັນຄົນສັນຊາດລາວ;
- ມີອາຍຸຕັ້ງແຕ່ 18 ປີ ຂຶ້ນໄປ;
- ມີລະດັບການສຶກສາ ຈົບປະຖົມສົມບູນຂຶ້ນໄປ;
- ມີສຸຂະພາບແຂງແຮງດີ;
- ເປັນພົນລະເມືອງດີ.

<u>ມາດຕາ 4.</u> ຜູ້ອອກແຮງງານລາວ ທີ່ເຮັດວຽກຢູ່ຕ່າງປະເທດ ມີສິດ ດັ່ງນີ້:

- ໄດ້ຮັບຄ່າແຮງງານ ແລະ ຄ່າຕອບແທນອື່ນໆ ຕາມສັນຍາ;
- ໄດ້ຮັບການປົກປ້ອງຜົນປະໂຫຍດຂອງຕົນເອງ ຕາມສັນຍາ ແລະ ກົດໝາຍ;
- ເຊັນສັນຍາກັບບໍລິສັດຈັດຫາງານໄປຕ່າງປະເທດ.

<u>ມາດຕາ 5.</u> ຜູ້ອອກແຮງງານລາວ ທີ່ເຮັດວຽກຢູ່ຕ່າງປະເທດ ມີໜ້າທີ່ ດັ່ງນີ້:

- ປະຕິບັດລະບຽບວິໄນການອອກແຮງງານ ຂອງປະເທດທີ່ຕົນອອກແຮງງານ ຢ່າງເຂັ້ມງວດ;
- ປະຕິບັດສັນຍາແຮງງານ ທີ່ຕົນໄດ້ລົງລາຍເຊັນ;
- ເຄົາລົບລະບຽບ, ກົດຫມາຍ ແລະ ຮີດຄອງປະເພນີຂອງ ສປປລາວ ແລະ ຂອງປະເທດ ທີ່ຕົນໄປອອກແຮງງານ;
- ປະຕິບັດພັນທະໃຫ້ລັດຢ່າງຖືກຕ້ອງ.

## ໝວດທີ III
## ເງື່ອນໄຂ, ສິດ ແລະໜ້າທີ່
## ຂອງບໍລິສັດ ຈັດຫາງານໄປ ຕ່າງປະເທດ

<u>ມາດຕາ 6.</u> ບໍລິສັດຈັດຫາງານໄປຕ່າງປະເທດ ມີເງື່ອນໄຂ ດັ່ງນີ້:

- ຕ້ອງແມ່ນບໍລິສັດ ທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນທຸລະກິດ ສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ ຕ່າງປະເທດ;
- ຕ້ອງເປັນບໍລິສັດ ທີ່ເຊື່ອຖືໄດ້, ມີທຶນຄ້ຳປະກັນ ໃນການສົ່ງຜູ້ອອກແຮງງານລາວ ໄປຕ່າງປະເທດ;

- ເປັນບໍລິສັດ ທີ່ມີລະບົບການຈັດຕັ້ງ, ມີບຸກຄະລາກອນ ທີ່ມີຄວາມຮູ້-ຄວາມສາມາດ.

ມາດຕາ 7. ບໍລິສັດຈັດຫາງານໄປຕ່າງປະເທດ ມີສິດ ດັ່ງນີ້:

- ເຄື່ອນໄຫວຊອກຫາຕະຫລາດແຮງງານ ຢູ່ຕ່າງປະເທດ ແລະ ເຊັນສັນຍາກັບບໍລິສັດຕ່າງປະເທດ;
- ນຳສົ່ງຜູ້ອອກແຮງງານລາວໄປຕ່າງປະເທດຕາມສັນຍາ;
- ໄດ້ຮັບຄ່າບໍລິການ ຕາມທີ່ໄດ້ລະບຸໄວ້ ຢູ່ໃນມາດຕາ 12 ຂອງດຳລັດສະບັບນີ້;
- ປົກປ້ອງຜົນປະໂຫຍດຂອງຕົນ ຕາມກົດຫມາຍ.

ມາດຕາ 8. ບໍລິສັດຈັດຫາງານໄປຕ່າງປະເທດ ມີໜ້າທີ່ ດັ່ງນີ້:

- ຄຸ້ມຄອງຜູ້ອອກແຮງງານລາວ ທີ່ຕົນສົ່ງອອກໄປຕ່າງປະເທດ ໃຫ້ຖືກຕ້ອງຕາມສັນຍາ;
- ເຄົາລົບຮີດຄອງປະເພນີ ແລະ ລະບຽບກົດຫມາຍຂອງປະເທດຕົນ ແລະ ປະເທດທີ່ຕົນສົ່ງຜູ້ອອກແຮງງານລາວໄປເຮັດວຽກ;
- ສະໜອງຂໍ້ມູນຂ່າວສານ ໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ຮັບຜິດຊອບຜົນປະໂຫຍດ ຂອງຜູ້ອອກແຮງງານລາວ ທີ່ຕົນສົ່ງໄປເຮັດວຽກຢູ່ຕ່າງປະເທດ;
- ຈັດຕັ້ງຝຶກອົບຮົມ ໃຫ້ຜູ້ອອກແຮງງານລາວ ກ່ອນການນຳສົ່ງ ຕາມການຊີ້ນຳຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ປະຕິບັດພັນທະໃຫ້ລັດຕາມກົດໝາຍ.

ມາດຕາ 9. ບໍລິສັດຈັດຫາງານໄປຕ່າງປະເທດ ທີ່ຈະນຳສົ່ງຜູ້ອອກແຮງງານລາວໄປຕ່າງປະເທດ ຕ້ອງປະກອບເອກະສານ ດັ່ງນີ້:

- ໃບສະເໜີ ຂໍອະນຸຍາດນຳສົ່ງ ເຖິງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ໃບອະນຸຍາດດຳເນີນທຸລະກິດ ສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ;
- ສັນຍາແຮງງານ ລະຫວ່າງ ຜູ້ອອກແຮງງານລາວ ກັບບໍລິສັດຈັດຫາງານໄປຕ່າງປະເທດ;
- ສັນຍາສະໜອງແຮງງານ ລະຫວ່າງ ບໍລິສັດຈັດຫາງານໄປຕ່າງປະເທດ ແລະ ບໍລິສັດທີ່ຈະນຳໃຊ້ຜູ້ອອກແຮງງານລາວ ຢູ່ຕ່າງປະເທດ.

## ໝວດທີ IV
## ສິດ ແລະ ໜ້າທີ່ ຂອງອົງການລັດ
## ຕໍ່ການຄຸ້ມຄອງການສົ່ງຜູ້ອອກແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ

ມາດຕາ 10. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີສິດ ແລະ ໜ້າທີ່ ລຸ່ມນີ້:

- ພິຈາລະນາ ການອະນຸຍາດໃຫ້ດຳເນີນທຸລະກິດ ສົ່ງຜູ້ອອກແຮງງານລາວໄປຕ່າງປະເທດ;

- ກຳນົດລະບຽບການລະອຽດ ກ່ຽວກັບການຄຸ້ມຄອງຜູ້ນຳສົ່ງ ແລະ ຜູ້ອອກແຮງງານລາວ ໄປຕ່າງປະເທດ;

- ກຳນົດປະເພດ ອາຊີບ, ຂົງເຂດ ທີ່ຫ້າມສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ;

- ດຳເນີນການກວດກາ, ຕິດຕາມ ການນຳສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ;

- ປະສານສົມທົບກັບອົງການທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນ;

- ສ້າງແຜນການສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ ຕາມແຜນການ 5 ປີ ແລະ ປະຈຳປີ.

<u>ມາດຕາ 11.</u> ກະຊວງການຕ່າງປະເທດ, ກະຊວງພາຍໃນ, ກະຊວງການເງິນ, ຄະນະກຳມະການແຜນການ-ການຮ່ວມມື ແລະ ກະຊວງທີ່ກ່ຽວຂ້ອງອື່ນໆ ມີສິດ ແລະ ໜ້າທີ່ ສົມທົບກັບ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ອອກຂໍ້ກຳນົດ ແລະ ບົດແນະນຳຕ່າງໆ ທີ່ພົວພັນເຖິງພາລະບົດບາດຂອງຕົນ ໃນການສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ.

## ໝວດທີ V
## ຄ່າທຳນຽມ ແລະ ຄ່າບໍລິການ ຈັດຫາງານໄປຕ່າງປະເທດ

<u>ມາດຕາ 12.</u> ຄ່າທຳນຽມ ສົ່ງຜູ້ອອກແຮງງານໄປຕ່າງປະເທດ ໃຫ້ປະຕິບັດຕາມ ລະບຽບກົດໝາຍ. ຫ້າມອົງການຂອງລັດ ເກັບຄ່າທຳນຽມ ແລະ ຄ່າອື່ນໆ ຊຶ່ງບໍ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ. ສ່ວນຄ່າບໍລິການຂອງ ບໍລິສັດຈັດຫາງານໄປຕ່າງປະເທດ ໃຫ້ຢູ່ພາຍໃຕ້ການຄຸ້ມຄອງຂອງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

## ໝວດທີ VI
## ການຍ້ອງຍໍຊົມເຊີຍ ແລະ ມາດຕະການຕໍ່ຜູ້ລະເມີດ

<u>ມາດຕາ 13.</u> ບໍລິສັດຈັດຫາງານໄປຕ່າງປະເທດ, ບຸກຄົນ ຫຼື ອົງການຈັດຕັ້ງຕ່າງໆ ທີ່ມີສ່ວນຊຸກຍູ້ ຫາກໄດ້ປະຕິບັດດຳລັດສະບັບນີ້ ຢ່າງຖືກຕ້ອງ ແລະ ມີປະສິດທິຜົນດີ ຈະໄດ້ຮັບການຍ້ອງຍໍ ຕາມຄວາມເໝາະສົມ.

<u>ມາດຕາ 14.</u> ຜູ້ອອກແຮງງານ, ບໍລິສັດຈັດຫາງານໄປຕ່າງປະເທດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ກ່ຽວຂ້ອງຕ່າງໆ ຫາກໄດ້ລະເມີດດຳລັດສະບັບນີ້ ຈະຖືກປັບໃໝ ແລະ ດຳເນີນຄະດີຕາມລະບຽບກົດໝາຍ.

## ໝວດທີ VII
## ບົດບັນຍັດສຸດທ້າຍ

<u>ມາດຕາ 15.</u> ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ມີສິດ ແລະ ໜ້າທີ່ຈັດຕັ້ງປະຕິບັດ ຕາມເນື້ອໃນຂອງດຳລັດສະບັບນີ້ ຢ່າງເຂັ້ມງວດ.

<u>ມາດຕາ 16.</u> ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ຂໍ້ກຳນົດ, ກົດລະບຽບ, ຄຳສັ່ງ ຫລື ນະຕິກຳລົງ ທີ່ໄດ້ປະກາດໃຊ້ໃນເມື່ອກ່ອນ ກ່ຽວກັບການຄຸ້ມຄອງ ແລະ ນຳສົ່ງຜູ້ອອກແຮງງານລາວ ໄປເຮັດວຽກຢູ່ຕ່າງປະເທດ ຫາກຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ນະຄອນວຽງຈັນ, ວັນທີ 28 ພຶດສະພາ 2002.

ນາຍົກລັດຖະມົນຕີ

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ